# ບົດທີ 10

# ພະເຢຊູເສຍພະໄທຍ້ອນກຸງເຢລູຊາເລັມ



ໃນບົດກ່ອນພວກເຮົາຮຽນເລື່ອງການມອບຄວາມຄິດ ໄວ້ໃຫ້ພະອົງ. ໃນບົດນີ້ເຮົາຈະຮຽນເລື່ອງການມອບ ຈິດໃຈ ແລະອາລົມໄວ້ໃຫ້ພະອົງ. ຜູ້ໃດກໍຕາມບໍ່ວ່າແຕ່ ຄົນຢູ່ໃນເມືອງຢ່າງດຽວ ແຕ່ທັງຄົນທີ່ຢູ່ພູຢູ່ປ່າຈຳເປັນຕ້ອງ ສະຫງົບຈິດໃຈເພື່ອຈະຄົງທີ່ໃນຊີວິດ.

**1** ໃນບົດທີ 6 ຫຼັກສູດນີ້ ເຮົາໄດ້ຮຽນມາເລື່ອງພະບັນຍັດຂໍ້ໃຫຍ່ທີ່ວ່າດ້ວຍ 3 ສ່ວນໃນຕົວບຸກຄົນເຮົາຄື: ຄວາມຄິດ ຈິດໃຈ ແລະ ກຳລັງ. ໃນສາມສ່ວນນັ້ນ ເຮົາໄດ້ຮຽນເລື່ອງການມອບສິ່ງໃດໄວ້ກັບພະເຈົ້າ ມາແລ້ວ? ________________________________________

## ເວລາແລງວັນອັງຄານ

**2** ພະອົງໂຕ້ຖຽງກັບພວກຟາລີຊາຍໃນພະວິຫານມາແລ້ວ ພະອົງຈະເດີນທາງກັບໄປບ້ານເບດທາເນຍ. ທັງພວກຟາລີ ຊາຍ ພວກຊາດູກາຍ ແລະນັກທຳພະຍາຍາມຈະຈັບຜິດພະອົງໃນເວລານັ້ນ, ແລ້ວຜົນສຸດທ້າຍພະອົງປະນາມເຂົາວ່າ ເປັນຄົນໜ້າຊື່ໃຈຄົດ. ເທື່ອນີ້ເປັນໂອກາດສຸດທ້າຍທີ່ພະອົງຈະມີສິດເສລີພາບເຂົ້າໆ ອອກໆ ຈາກພະວິຫານ ພະອົງຈຶ່ງ ເສົ້າໃຈຫຼາຍ. ໃຫ້ທ່ານອ່ານ ມທ 23:37-39. ພະອົງສະແດງຄວາມທຸກໃນສ່ວນໃດ? (ເລືອກ)

ກ. ຄວາມຄິດ ຂ. ຈິດໃຈ ຄ. ກຳລັງ

**3** ຄວາມສຸກຄວາມທຸກຄວາມຕື່ນເຕັ້ນແລະຄວາມໂສກເສົ້າຂຶ້ນຢູ່ກັບຈິດໃຈທັງໝົດ. ໃນແຕ່ລະຂໍ້ຕໍ່ໄປນີ້ ມີອັນໃດແດ່ ທີ່ ຂຶ້ນຢູ່ກັບຈິດໃຈ? (ເລືອກ)

| | | |
|---|---|---|
| ກ. ຄວາມກຽດຊັງກັນ | ຂ. ຄວາມຢ້ານ | ຄ. ຄວາມຮັກ |
| ງ. ຄວາມຮູ້ | ຈ. ຄວາມຮູ້ສຶກຜິດ | ສ. ຄວາມຜາສຸກ |
| ຊ. ຄວາມຈື່ຈຳ | ຍ. ຄວາມຕົກລົງ | ດ. ຄວາມຫ່ວງ |

**4** ມະນຸດເຮົາມີອາລົມຈິດໃຈ ສ່ວນເຄື່ອງຈັກນັ້ນບໍ່ມີ, ຖ້າເຄື່ອງຈັກຈະເຮັດເໝືອນຢ່າງກັບມະນຸດເຮົາກໍ່ຕາມ ແຕ່ເຮົາຈະຖື ວ່າບໍ່ມີນໍ້າໜັກເພາະບໍ່ມີຈິດໃຈ. ຍົກຕົວຢ່າງ:

ກ. ເຮົາຟັງເພງຮັກຈາກເທັບກາແສັດກໍ່ອາດຈະມ່ວນຫູຢູ່ ແຕ່ເຄື່ອງນັ້ນບໍ່ມີ _____ ພ້ອມ. (ຕື່ມ)

ຂ. ອາດຈະມີຄວາມຄຽດຊັງທີ່ອັດໃສ່ ເທັບກາແສັດທີ່ເຮັດໃຫ້ຜູ້ຟັງຈັບໃຈ. ເຄື່ອງນັ້ນຮູ້ສຶກມີຄວາມກຽດຊັງບໍ່? ____________________

**5** ອາລົມຈິດໃຈ ເປັນພອນສະຫວັນທີ່ມາຈາກພະເຈົ້າ. ເຄື່ອງໃດກໍ່ອາດຈະມີກຳລັງຢູ່ເຄື່ອງຄອມພິວເຕີກໍ່ອາດຈະເບິ່ງຄື ມີຄວາມສະຫຼາດຄືກັນກັບຄວາມຄິດຂອງມະນຸດເຮົາແຕ່ເຄື່ອງໃດກໍ່ຕາມບໍ່ມີສ່ວນໃນອາລົມຈິດໃຈ. ຖ້າມະນຸດເຮົາບໍ່ມີອາລົມຈິດໃຈ ຈະຄ້າຍຄືກັບຫຍັງ? _____

**6** ກ. ພະເຈົ້າສ້າງມະນຸດໃຫ້ບໍລິບູນທັງໃນຄວາມຄິດ ໃນກຳລັງ ແລະຫຍັງອີກ? __________

ຂ. ຜົນຮັບຂອງບາບກາຍເປັນຄິດ ____________________ . (ຕື່ມຄວາມຂາດ)

**7** ຄົນໃດທີ່ຕຶງຄຽດກໍ່ອາດຈະຢູ່ຍາກດ້ານຈິດໃຈ. ມີບາງຄົນກິນຢາເພື່ອໃຫ້ສະຫງົບຈິດໃຈ,ມີບາງຄົນທີ່ຕ້ອງເຂົ້າ ໂຮງໝໍເພາະມີໂລກດ້ານຈິດໃຈແລະບັນຫາດ້ານເສັ້ນປະສາດ. ຈິດໃຈຂອງເຂົາຄິດໂກງເພາະຫຍັງ? ____________________

**8** ຜົນຮັບຈາກບາບດ້ານອາລົມຈິດໃຈກໍ່ອາດຈະໜັກກວ່າ ຜົນຮັບບາບດ້ານຄວາມຄິດອີກ ເພາະເຮົາສາມາດບັງຄັບ ຄວາມຄິດໄດ້ຫຼາຍກວ່າອາລົມຈິດໃຈ. ແມ່ນສ່ວນໃດເສຍຫາຍຫຼາຍກວ່າລະຫວ່າງຄວາມຄິດ ແລະຈິດໃຈ? ____________________

**9** ທ່ານເອງອາດຈະສັງເກດຢ່າງດຽວກັນ,ຈິດໃຈຂອງເຮົາຄ້າຍຄືກັນກັບພູເຂົາໄຟທີ່ບໍ່ຮູ້ເວລາຈະລະເບີດອອກ ຄືກະກ່ອນບໍ່ ໄດ້. ຜົນຮັບຂອງຄວາມບາບໃນຈິດໃຈເຮົາເປັນຢ່າງໃດ? (ເລືອກ)

ກ. ຜົນຮັບດີທີ່ມີຄຸນຄ່າຢ່າງເປັນປະໂຫຍດ. ຂ. ຜົນຮັບບໍ່ດີບໍ່ຊົ່ວ.

ຄ. ຜົນຮັບທີ່ອັນຕະລາຍຫຼາຍ.

**10** ດັ່ງນັ້ນເຮົາຄວນຈະມອບຈິດໃຈເຮົາໄວ້ໃຫ້ພະເຈົ້າບັງຄັບ. ພະບັນຍັດຂໍ້ໃຫຍ່ສັ່ງສອນວ່າເຮົາຈົ່ງຮັກໃຜດ້ວຍສຸດຈິດໃຈ? ____________________

**11** ໃຫ້ທ່ານອ່ານ ມທ 23:37 ອີກ. ໃນຂໍ້ພະຄຳນັ້ນເຫັນອາລົມຈິດໃຈຂອງພະເຢຊູແລະອາລົມຈິດໃຈຂອງຊາວເຢລູຊາເລັມ ດ້ວຍ.

ກ. ແມ່ນໃຜສະແດງຄວາມກຽດຊັງ? ____________________

ຂ. ແມ່ນໃຜສະແດງຄວາມຮັກ? ____________________

**12** ກ. ໃນ ມທ 23:37 ນັ້ນ ຊາວເຢລູຊາເລັມສະແດງຄວາມກຽດຊັງອອກມາຢ່າງໃດ? ____________________

ຂ. ພະເຢຊູສະແດງຄວາມຮັກຢ່າງໃດ?

____________________



**13** ກ. ໃນຂໍ້ພະຄຳພີນັ້ນ ເຫັນອາລົມຈິດໃຈສອງຢ່າງໃດ? _____________ ແລະ ________
ຂ. ອັນໃດທີ່ອັນຕະລາຍຫຼາຍ? ________________________________________

**14** ຄວາມກຽດຊັງອາດຈະເກີດມີຂຶ້ນມາຍ້ອນຄວາມຢ້ານກ່ອນ, ຜູ້ທີ່ກຽດຊັງຢ່າງນັ້ນ ອາດຈະໃຈຮ້າຍດ້ວຍ, ອາດຈະອິດ ສາຫຼືອາດຈະສຳນຶກຕົວຕ່ຳຕ້ອຍກວ່າໝູ່. ຄວາມກຽດຊັງຂອງຊາວເຢລູຊາເລັມປາກົດມາດ້ວຍການກະທຳຫຍັງ? ________________________________

**15** ພວກຟາລິຊາຍພ້ອມດ້ວຍກັບປະຊາຊົນໃນກຸງເຢລູຊາເລັມ ພວກນັກທຳໂມໂຫໂຫໂສຢ່າງໜັກ, ພະເຢຊູຈຶ່ງມີເຫດທີ່ ຈະວິຈານເຂົາ. ຍົກຕົວຢ່າງ
ກ. ໃນ ມທ 25:35 ເຂົາໄດ້ຂ້າໃຜໃນພະວິຫານ? ____________________________
ຂ. ດັ່ງນັ້ນ ແມ່ນຊາວເມືອງໃດທີ່ຂ້າເພິ່ນ? ________________________________

**16** ໃຫ້ອ່ານ ໂຢຮັນ 8:58-59 ເມື່ອພະເຢຊູບອກວ່າ "ກ່ອນອັບລາຮາມເກີດ ເຮົານີ້ກໍເປັນຢູ່ແລ້ວ" ພວກຄົນຢິວຈັບກ້ອນຫີນ ເພື່ອຈະເຮັດຫຍັງ? ______________________________

**17** ກ. ໃນ ໂຢຮັນ 10:31 ເຂົາຈະເຮັດຫຍັງອີກ? ________________________________
ຂ. ໃນເວລານັ້ນພະອົງຢູ່ໃນກຸງໃດ? ____________________________________
ຄ. ຄົນຢິວນັ້ນສະແດງອາລົມຢ່າງໃດໃນເວລານັ້ນ? _________________________

**18** ຄົນທີ່ໃຈຮ້າຍຈົນກວ່າຈະບັງຄັບຕົວບໍ່ໄດ້ ເປັນຢ່າງໃດ? (ເລືອກ)
ກ. ໝັ້ນຄົງຢູ່ສະເໝີ ຂ. ປ່ຽນແປງຢູ່ສະເໝີ ຄ. ມີຄວາມຮັກຢູ່ສະເໝີ

*ຄົນທີ່ໃຈຮ້າຍຈົນກວ່າບັງຄັບຕົນເອງບໍ່ໄດ້ ອາດຈະທຳລາຍຕົນເອງ ອາດຈະທຳລາຍຄອບຄົວຂອງຕົນ ຫຼືອາດ ຈະທຳລາຍສັງຄົມທີ່ເພິ່ນຢູ່. ການຢ່າງນັ້ນປະກົດມາ ໃນຄຳທຳນວາຍຂອງພະເຢຊູ.*

**19** ໃຫ້ອ່ານ ມທ 24:1-2 ພະເຢຊູທຳນວາຍລ່ວງໜ້າເລື່ອງທີ່ພະວິຫານແລະທັງກຸງເຢລູຊາເລັມຈະຖືກທຳລາຍ. ກຸງນັ້ນ ຖືກເສຍຫາຍຍ້ອນອາລົມຈິດໃຈ ແລະທ່າທີຂອງຊາວກຸງເຢລູຊາເລັມ.
ກ. ຄຳທຳນວາຍນັ້ນສຳເລັດໃນປີໃດ? __________________________
ຂ. ແມ່ນກອງທັບຈັກກະພັດໃດທີ່ທຳລາຍ? ____________________
ຄ. ໃນທຸກວັນນີ້ມີສ່ວນໃດຈາກພະວິຫານທີ່ຍັງເຫຼືອຢູ່? ______________
ງ. ເຂົາສ້າງຕຶກໃດໃນບ່ອນພະວິຫານນັ້ນ? ______________________



**20** ພະເຢຊູກໍຮູ້ທຸກຮູ້ສຸກດ້ວຍ ແຕ່ອາລົມຈິດໃຈຂອງພະອົງຢູ່ໃຕ້ການປົກຄອງຂອງພະເຈົ້າ.
ກ. ໃນ ມທ 23:37-39 ພະອົງປາຖະໜາເຮັດຫຍັງ? __________________________
______________________________________________________________
ຂ. ທີ່ພະອົງຍົກເລື່ອງແມ່ໄກ່ຢາກຮວບຮວມລູກໄກ່ໄວ້ໃຕ້ປີກໝາຍຄວາມວ່າຢ່າງໃດ? ____
______________________________________________________________
ຄ. ແມ່ນແຕ່ເທື່ອດຽວນີ້ທີ່ພະເຢຊູທຸກໃຈບໍ່? ______________________________

**21** ອາລົມຈິດໃຈຂອງຄົນທີ່ຢູ່ໃຕ້ການປົກຄອງຂອງພະເຈົ້າເປັນຢ່າງໃດ? (ເລືອກ)
ກ. ໝັ້ນຄົງຢູ່ສະເໝີ ຂ. ປ່ຽນແປງຢູ່ສະເໝີ ຄ. ກຽດຊັງຢູ່ສະເໝີ

**22** ກ. ລັກສະນະອາລົມຈິດໃຈຂອງຄົນທີ່ຢູ່ໃຕ້ການປົກຄອງຂອງພະເຈົ້າເປັນຢ່າງໃດ?________
ຂ. ຜູ້ບໍ່ມີພະເຈົ້າບັງຄັບ ມີອາລົມຈິດໃຈຢ່າງໃດ? ______________________________

**23** ບາງເທື່ອຄວາມຄິດຂອງເຮົາໝັ້ນຄົງຢູ່ແຕ່ອາລົມຈິດໃຈບໍ່ໝັ້ນຄົງປານໃດ. ໃຫ້ທ່ານອ່ານ 2 ໂກລິນໂທ 5:7 ຜູ້ທີ່ຈະມີໃຈໝັ້ນຄົງຈະດຳເນີນໄປຕາມ _______ ບໍ່ໃຊ້ຕາມ _______ . (ຕື່ມ)

**24** ປະຊາຊົນໃນກຸງເຢລູຊາເລັມບໍ່ໄດ້ດຳເນີນຊີວິດໄປຕາມຄວາມເຊື່ອ ເຂົາດຳເນີນໄປຕາມທີ່ຕາເຫັນ. ເຂົາເຫັນພະເຢຊູ ເຂົ້າກຸງຢ່າງຜູ້ມີໄຊແລະເຂົາຍິນດີຕ້ອນຮັບ. ຕໍ່ໄປເຂົາເຫັນພວກຜູ້ນຳໃນສາດສະໜາຍິວເອົາພະອົງມາຟ້ອງ ຕໍ່ໜ້າເຈົ້າໜ້າທີ່ຈັກກະພັດໂລມ ເຂົາກໍບໍ່ຕ້ອນຮັບອີກແລ້ວ.

* ຜູ້ທີ່ອາໄສສິ່ງທີ່ເຫັນກັບຕາກໍປ່ຽນແປງຕາມສິ່ງເຫຼົ່ານັ້ນຢູ່ສະເໝີ.
* ຜູ້ທີ່ອາໄສພະເຈົ້າກໍໝັ້ນຄົງເໝືອນຢ່າງພະເຈົ້າໝັ້ນຄົງຢູ່ສະເໝີ.

ກ. ສິ່ງຂອງທີ່ເຮົາເຫັນກັບຕາເຄີຍປ່ຽນແປງດັ່ງນັ້ນຜູ້ທີ່ດຳເນີນຊີວິດຕາມທີ່ຕາເຫັນຈະເປັນຢ່າງໃດ? ______________________________________________________
ຂ. ຜູ້ທີ່ດຳເນີນຕາມຄວາມເຊື່ອໃນພະເຈົ້າເປັນຢ່າງໃດ? _________________________

*ມີຄຣິດສະຕຽນບາງຄົນທີ່ອາໄສສິ່ງທີ່ເຫັນກັບຕາຫຼາຍເກີນໄປດ້ວຍ. ເທື່ອໃດທີ່ເຂົາພົບການດີເຂົາດີໃຈ ແລະເທື່ອ ໃດທີ່ພົບການຍາກເຂົາກໍອຸກໃຈ. ເຂົາບໍ່ໄດ້ມອບອາລົມຈິດໃຈໃຫ້ພະເຈົ້າປົກຄອງເທື່ອ. ຜູ້ໃດທີ່ໄວ້ວາງໃຈກັບພະ ເຈົ້າຊຶ່ງບໍ່ມີການປ່ຽນແປງແລະອາໄສຄວາມຮັກຂອງພະອົງທີ່ໝັ້ນຄົງ ຄົນນັ້ນກໍມີຈິດໃຈໝັ້ນດ້ວຍ. ພະທຳຍອດເພງ 8:7 ເວົ້າເລື່ອງຄວາມຮັກວ່າ "ນ້ຳຫຼວງຫຼາຍກໍມອດ ຫຼືຖ້ວມມັນບໍ່ໄດ້"*

**25** ກ. ພະເຢຊູຢາກຮວບຮວມໃຜ? ________________________________________
ຂ. ຄວາມຮັກຂອງພະເຈົ້າປ່ຽນແປງບໍ່? ___________________________________
ຄ. ທ່າທີຂອງຊາວເຢລູຊາເລັມປ່ຽນແປງບໍ່? ________________________________

**26** ກ. ຊາວເຢລູຊາເລັມດຳເນີນຕາມຫຍັງ? _________________________________
ຂ. ພະເຢຊູດຳເນີນຕາມຫຍັງ? ____________________________________________
ຄ. ຄຣິດສະຕຽນທີ່ມີອາລົມຈິດໃຈຢ່າງໝັ້ນຄົງດຳເນີນຕາມຫຍັງ? _________________
ງ. ຜູ້ທີ່ມີອາລົມຈິດໃຈປ່ຽນແປງຢູ່ສະເໝີດຳເນີນຕາມຫຍັງ? ___________________

**27** ກ. ຜູ້ໃດທີ່ບໍ່ມີພະເຈົ້າປົກຄອງໃນຈິດໃຈເປັນຢ່າງໃດສະເໝີ? ___________________
ຂ.ຜູ້ທີ່ມີພະເຈົ້າປົກກຄອງເດ? _________________________________________
ຄ.ເຮົາຕ້ອງດຳເນີນຊີວິດຕາມຫຍັງ? ______________________________________

**28** ໃນປີ ຄ.ສ.70 ຊາວເຢລູຊາເລັມຖືກຄວາມວິນາດຢ່າງໃດ? ______________________

**29** ທີ່ເຮົາບອກວ່າຊີວິດສະຕຽນທຸກຄົນຄວນທີ່ຈະດຳເນີນຊີວິດດ້ວຍຄວາມເຊື່ອ ບໍ່ແມ່ນຕາມທີ່ເຫັນກັບຕາ ກໍບໍ່ແມ່ນວ່າ ເຮົາຈະບໍ່ຮູ້ທຸກບໍ່ຮູ້ສຸກຕໍ່ໄປ. ແທນທີ່ຄວາມສຸກແລະຄວາມທຸກນັ້ນຈະບັງຄັບເຮົາ, ຄວາມສຸກຄວາມທຸກນັ້ນຈະຢູ່ໃຕ້ການ ປົກຄອງຂອງພະເຈົ້າ. ຄືພະວິນຍານບໍລິສຸດຈະ ____________ ອາລົມຈິດໃຈຂອງເຮົາແທນທີ່ອາລົມຈິດໃຈ ນັ້ນຈະ _________ ເຮົາ. (ຕື່ມ)

**30** ຖ້າເຮົາບໍ່ມີອາລົມຈິດໃຈເລີຍກໍຄ້າຍຄືວ່າເຮົາເສຍປະສາດ. ພະເຈົ້າສ້າງໃຫ້ເຮົາມີທັງຈິດໃຈ ຄວາມຄິດ ແລະກຳລັງ ດ້ວຍແລ້ວພະເຈົ້າພໍພະໄທກັບມະນຸດທີ່ສ້າງໄວ້ນັ້ນ. ຖ້າບໍ່ມີອາລົມຈິດໃຈເຮົາຈະຄ້າຍຄືກັນກັບສິ່ງໃດ? (ເລືອກ)

ກ. ເຄື່ອງຈັກ ຂ. ຄົນເສຍປະສາດ ຄ. ເທວະດາ ງ. ພູເຂົາ

**31** ພະເຢຊູບໍ່ມີຜິດຈັກເທື່ອ ແຕ່ເຖິງຢ່າງນັ້ນກໍຕາມ ພະອົງຍັງເຫັນອົກເຫັນໃຈພວກເຮົາ ແລະຮ່ວມທຸກຮ່ວມສຸກກັບເຮົາ ຢູດ້ວຍ. ໃຫ້ທ່ານອ່ານຂໍ້ພະຄຳພີດັ່ງຕໍ່ໄປນີ້ແລ້ວຂຽນອາລົມຈິດໃຈທີ່ພະອົງສະແດງອອກມາໃນຂໍ້ນັ້ນ:

ກ. ມັດທາຍ 9:36 ________________________

ຂ. ມັດທາຍ 21:12 _______________________

ຄ. ມາລະໂກ 3:5 ________________________

ງ. ລູກາ 7:13 ____________________________

ຈ. ລູກາ 10:21 __________________________

ສ. ລູກາ 19:41 __________________________

ຊ. ໂຢຮັນ 11:35 ________________________

ຍ. ໂຢຮັນ 11:36 ________________________



**32** ທີ່ຈະຮູ້ຄວາມຢ້ານ ຄວາມໃຈຮ້າຍຄວາມສຸກແລະຄວາມທຸກເປັນສິ່ງທຳມະດາທີ່ພວກເຮົາຮູ້ ທັງພະເຢຊູກໍຮູ້ດ້ວຍ. ແມ່ນພວກໃດຕໍ່ໄປນີ້ທີ່ເຫັນວ່າມີອາລົມຈິດໃຈ? (ເລືອກ)

ກ. ແຕ່ສະເພາະຄົນຊົ່ວ ຂ. ພະເຢຊູ

ຄ. ທຸກຄົນ ງ. ຂ້າພະເຈົ້າເອງ

**33** ຖ້າເຮົາມີແຕ່ກົດອາລົມຈິດໃຈຂອງເຮົາໄວ້ບໍ່ໃຫ້ປາກົດອອກມາ ແຕ່ມັນຍັງມີຢູ່ທີ່ເຮົາປົກຄອງບໍ່ໄດ້. ອາລົມຈິດໃຈ ນັ້ນເປັນສິ່ງທີ່ພະເຈົ້າສ້າງໄວ້ ແຕ່ເທື່ອໃດທີ່ອາລົມຈິດໃຈມາບັງຄັບເຮົາກໍບໍ່ຄວນທີ່ເຮົາຈະຮັບຮູ້ອາລົມຈິດໃຈ ນັ້ນແລ້ວມອບໄວ້ໃຫ້ພະເຈົ້າເພື່ອໃຫ້ພະອົງໃຊ້ຢ່າງຖືກຕ້ອງ.

ກ. ເຮົາບໍ່ຄວນຈະອຳສິ່ງໃດ? ________________________________________

ຂ. ເຮົາຄວນເຮັດຫຍັງດີກວ່າ? ______________________________________

**34** ພະເຢຊູເຫັນເຂົາຄ້າຂາຍໃນພະວິຫານ ພະອົງກໍໃຈຮ້າຍ, ພະອົງເຫັນວ່າພວກນັກທຳແລະຟາລິຊາຍໜ້າຊື່ໃຈຄົດ.

ພະອົງກໍຮ້າຍຢູ່ ແຕ່ໃນ ມທ 23:37 ເຫັນພະອົງສະແດງສິ່ງໃດອອກມາ? ______________

**35** ເທື່ອໃດທີ່ອາລົມຈິດໃຈຈວນຈະບັງຄັບເຮົາ ຄວນເຮັດຕາມຕໍ່ໄປນີ້: (ຕື່ມຄວາມທີ່ຂາດ)

ກ. ຢ່າເບິ່ງສະພາບແວດລ້ອມ ແຕ່ຈົ່ງໄວ້ວາງໃຈໃນຄວາມ ________ ຂອງພະ __________ . ຄືຈົ່ງດຳເນີນ ໄປຕາມຄວາມ _______________ ບໍ່ໃຊ້ຕາມທີ່ຕາ _______________ .

ຂ. ເຮົາຄວນຈະອ້ອນວອນຊອກຫາທາງທີ່ຈະໃຊ້ອາລົມຈິດໃຈໃຫ້ສະແດງຄວາມ _________ ຂອງ ____________ .

**36** ໝາຍຄວາມວ່າເຮົາຄວນຈະສະແດງອາລົມຈິດໃຈອອກມາໃນສະພາບທີ່ຈະຖະຫວາຍພະກຽດໃຫ້ພະເຈົ້າ. ຍົກຕົວຢ່າງ ເທື່ອໃດທີ່ເຮົາຈວນຈະໃຈຮ້າຍ ຈະເຮັດຢ່າງໃດທີ່ຈະຖະຫວາຍພະກຽດໃຫ້ພະເຈົ້າ (ເລືອກ)

ກ. ອອກໄປທ່ຽວປ່າແລ້ວອ້ອນວອນເພື່ອຄົນທີ່ຜິດໃຈເຮົາ

ຂ. ຫຼິ້ນກັບເດັກນ້ອຍຈົນກວ່າຈະເບົາໃຈ

ຄ. ຢູ່ໃນເຮືອນຜູ້ດຽວຈົນກວ່າຈະກຸ້ມໃຈເຫຼືອເກີນ

ງ. ເຮັດການດີຕໍ່ຄົນທີ່ຜິດໃຈເຮົາ

ຈ. ແກ້ງເຮັດຄືບໍ່ເປັນຫຍັງ

ສ. ນຶກເຖິງຄວາມຮັກຂອງພະເຈົ້າ ແລະສັນລະເສີນພະອົງ

**37** ຖ້າທ່ານເສົ້າໃຈມາແຕ່ເຫິງ ອາດຈະຮັກສາອາລົມຈິດໃຈໃຫ້ດີຢ່າງໃດ? (ເລືອກ)

ກ. ລະນຶກເຖິງບັນຫາຈາກທຸກສ່ວນ

ຂ. ໄປຢ້ຽມຢາມຄົນທຸກ ຫຼືຄົນເຈັບ

ຄ. ສັນລະເສີນພະເຈົ້າທີ່ພະອົງຮັກສາຊີວິດໄວ້

ງ. ເລີກບໍ່ຮັບໃຊ້ພະເຈົ້າຄາວໜຶ່ງກ່ອນ

**38** ຄຼິດສະຕຽນຄົນໃດທີ່ຈະມີອາລົມຈິດໃຈຢ່າງໝັ້ນຄົງຈົ່ງດຳເນີນຊີວິດຕາມ _____________ ບໍ່ໃຊ້ຕາມ___________________. (ຕື່ມຄວາມ)

**39** ກ. ຄຼິດສະຕຽນສົມຄວນຈະສະແດງອາລົມຈິດໃຈຢ່າງໃດ? ________________________

ຂ. ບໍ່ຄວນຈະເຮັດຢ່າງໃດ? ______________________________________________

**40** ໃຫ້ອ່ານ 1 ໂກລິນໂທ 13:4-7 ແມ່ນໃຜສະແດງຄວາມຮັກຢ່າງນັ້ນຕໍ່ຊາວກຸງເຢລູຊາເລັມ?

__________________________________________________________________

| |
|---|
| ໃຫ້ທ່ານຈົ່ງອ້ອນວອນຕໍ່ພະເຈົ້າມອບອາລົມຈິດໃຈໄວ້ໃຫ້ພະອົງປົກຄອງ<br>ບໍ່ໃຫ້ສິ່ງແວດລ້ອມບັງຄັບເຮົາໄປ. |

*ຈົ່ງຕອບບົດເສັງທີ 10*

**ຄຳຕອບ:**

**1** *ຄວາມຄິດ*

**2** *ຂ ຖືກ*

**3** *ກ ຂ ຄ ຈ ສ ດ ຖືກ*

**4** *ກ. ອາລົມ (ຈິດໃຈ) ຂ. ບ*

**5** *ເຄື່ອງຈັກ*

**6** *ກ. ຈິດໃຈ ຂ. ຄິດໂກງ*

**7** *ຄວາມບາບ*

**8** *ຈິດໃຈ*

**9** *ຄ ຖືກ*

**10** *ຮັກພະເຈົ້າ*

**11** *ກ. ຊາວເຢລູຊາເລັມ ຂ. ພະເຢຊູ*

**12** *ກ. ເຂົາຂ້າຜູ້ປະກາດພະທຳ ຂ. ຢາກຮວບຮວມເຂົາໄວ້*

**13** *ກ. ຄວາມກຽດຊັງ ແລະຄວາມຮັກ ຂ. ຄວາມກຽດຊັງອັນຕະລາຍ*

**14** *ເຂົາຂ້າຜູ້ປະກາດພະທຳ*

**15** *ກ. ຊາຂາລີຢາ ລູກຊາຍຂອງບາລາຂີຢາ ຂ. ກຸງເຢລູຊາເລັມ*

**16** *ຈະຄວ່າງໃສ່ພະອົງ*

**17** *ກ. ຄວ່າງກ້ອນຫີນໃສ່ພະອົງ ຂ. ເຢລູຊາເລັມ ຄ. ຄວາມກຽດຊັງ*

**18** *ຂ ຖືກ*

**19** *ກ. ຄ.ສ.70*

*ຂ. ຈັກກະພັດໂລມ*

*ຄ. ແຕ່ຮາກຖານຂ້າງດຽວ*

*ງ. ສຸເຫຼົ່າສັກສິດ (ຂອງສາດສະໜາອິດສະລາມ)*

**20** *ກ. ຮວບຮວມຊາວເຢລູຊາເລັມ ເໝືອນດັ່ງແມ່ໄກ່ຮວບຮວມລູກ*

*ຂ. ຢາກໃຫ້ເຂົາມາເພິ່ງພາອາໄສພະອົງຈິ່ງຈະໄດ້ລອດ*

*ຄ. ບໍ່ແມ່ນແຕ່ເທື່ອດຽວນີ້*

**21** *ກ ຖືກ*

**22** *ກ. ໝັ້ນຄົງຢູ່ສະເໝີ ຂ. ປ່ຽນແປງຢູ່ສະເໝີ*

**23** *ຄວາມເຊື່ອ... ທີ່ເຫັນກັບຕາ*

**24** *ກ. ຈະປ່ຽນແປງ ຂ. ໝັ້ນຄົງ*

**25** *ກ. ຊາວເຢລູຊາເລັມ ຂ. ບໍ່ປ່ຽນແປງ ຄ. ປ່ຽນແປງ*

**26** *ກ. ທີ່ຕາເຫັນ ຂ. ຄວາມເຊື່ອ ຄ. ຄວາມເຊື່ອ ງ. ທີ່ຕາເຫັນ*

**27** *ກ. ປ່ຽນແປງ ຂ. ໝັ້ນຄົງ ຄ. ຄວາມເຊື່ອ*

**ຄຳຕອບ (ຕໍ່):**

**28** *ຈັກກະພັດໂລມທຳລາຍກຸງເຢລູຊາເລັມ*

**29** *ປົກຄອງ... ປົກຄອງ.*

**30** *ກ ຂ ຖືກ.*

**31** *ກ. ສົງສານ. ຂ. ໃຈຮ້າຍ. ຄ. ທຸກໃຈ (ເຄືອງໃຈ) ງ. ເມດຕາ.*
*ຈ. ຊື່ນຊົມຍິນດີ. ສ. ສົງສານ (ຮ້ອງໄຫ້) ຊ. ຮ້ອງໄຫ້. ຍ. ຮັກ.*

**32** *ຂ ຄ ງ ຖືກ.*

**33** *ກ. ອາລົມຈິດໃຈ ຂ. ມອບໄວ້ໃຫ້ພະເຈົາປົກຄອງ*

**34** *ຄວາມຮັກ*

**35** *ກ. ຮັກ... ເຈົາ... ເຊື່ອ... ເຫັນ ຂ. ຮັກ... ພະເຈົາ*

**36** *ກ ຂ ງ ສ ຖືກ*

**37** *ຂ ຄ ຖືກ*

**38** *ຄວາມເຊື່ອ ທີ່ຕາເຫັນ*

**39** *ກ. ສະແດງຢ່າງທີ່ພະເຈົາປົກຄອງ ແລະຖະຫວາຍກຽດໃຫ້ພະເຈົາ.*
*ຂ. ຢ່າອຳໄວ້ແກ້ງເຮັດຄືບໍ່ເປັນຫຍັງ (ຢ່າໃຫ້ອາລົມຈິດໃຈບັງຄັບທ່ານ)*

**40** *ພະເຢຊູ.*